## ມິຊຊາອາທິດທີ 3 ກຳນົດບຳເພັນສິນ
## ວັນທີ 12 ມີນາ 2023



**ພຣະວໍລະສານໂດຍນັກບຸນຍອງ 4, 5-15, 19ກ-26, 39ກ, 40-42 (ແບບສັ້ນ)**

ໃນເວລານັ້ນ, ພຣະເຢຊູເຈົ້າສະເດັດມາເຖິງເມືອງໜຶ່ງໃນແຂວງຊາມາຣີ ຊື່ວ່າ: ຊີກາ, ໃກ້ກັບທົ່ງນາທີ່ຢາໂກ້ບໄດ້ຍົກໃຫ້ຢໍແຊບຸດຂອງເພິ່ນ. ຢູ່ທີ່ນັ້ນມີນ້ຳສ້າງຂອງຢາໂກ້ບ. ພຣະເຢຊູເຈົ້າເດີນທາງເມື່ອຍຈຶ່ງນັ່ງລົງທີ່ຂອບສ້າງນັ້ນ. ຂະນະນັ້ນປະມານເກືອບທ່ຽງແລ້ວ. ມີຍິງຊາວຊາມາຣີຜູ້ໜຶ່ງມາຕັກນ້ຳ. ພຣະເຢຊູເຈົ້າຈຶ່ງກ່າວກັບນາງວ່າ: ຂໍນ້ຳກິນແດ່. ເວລານັ້ນພວກສາວົກເຂົ້າໄປຊື້ຂອງກິນໃນເມືອງ. ຍິງຊາວຊາມາຣີທູນວ່າ: ທ່ານເປັນຄົນຊາວຢູເດວ, ເປັນຫຍັງຈຶ່ງມາຂໍນ້ຳກິນນຳຂ້ອຍຜູ້ເປັນຊາວຊາມາຣີ. ເວລານັ້ນ, ພວກຢູເດວກັບພວກຊາມາຣີບໍ່ຖືກກັນ.

ພຣະເຢຊູເຈົ້າຈຶ່ງກ່າວຕອບວ່າ: ຖ້າເຈົ້າຮູ້ຈັກພຣະຄຸນຂອງພຣະເຈົ້າ, ແລະຮູ້ວ່າຜູ້ທີ່ເວົ້າກັບເຈົ້າວ່າ: ຂໍນ້ຳກິນແດ່ນັ້ນແມ່ນໃຜແລ້ວ, ເຈົ້າຄົງຈະຂໍນ້ຳຈາກເພິ່ນຊ້ຳແລະເພິ່ນຈະປະທານນ້ຳບັນດານຊີວິດແກ່ເຈົ້າ.

ຍິງນັ້ນຕອບວ່າ: ອາດຍາເອີຍ, ທ່ານບໍ່ມີຫຍັງຈະຕັກ ແລະສ້າງນີ້ກໍເລິກດ້ວຍ, ທ່ານຈະເອົານ້ຳບັນດານຊີວິດນີ້ມາແຕ່ໃສ? ທ່ານໃຫຍ່ກວ່າຢາໂກ້ບບັນພະບຸລຸດຂອງພວກເຮົາຜູ້ໄດ້ຍົກສ້າງໃຫ້ພວກເຮົາບໍ? ເພິ່ນເອງແລະພວກລູກຫລານພ້ອມທັງຝູງສັດກໍໄດ້ກິນນ້ຳໃນສ້າງນີ້ດ້ວຍ.

ພຣະເຢຊູເຈົ້າກ່າວວ່າ: ຜູ້ໃດດື່ມນ້ຳນີ້, ຍັງຈະຢາກອີກ. ສ່ວນຜູ້ໃດດື່ມນ້ຳທີ່ເຮົາຈະປະທານໃຫ້ນັ້ນ ຈະບໍ່ຫອດຫິວອີກເລີຍ. ແລະນ້ຳທີ່ເຮົາຈະປະທານໃຫ້ນັ້ນຈະເກີດເປັນນ້ຳພຸພຸ່ງຂຶ້ນເຖິງຊີວິດນິລັນດອນຢູ່ໃນຕົວເຂົາ.

ຍິງນັ້ນທູນວ່າ: ອາດຍາເອີຍ, ຂໍທານນ້ຳນັ້ນໃຫ້ຂ້ອຍທ້ອນແລ້ວຂ້ອຍຈະບໍ່ຫິວແລະບໍ່ຕ້ອງມາຕັກນ້ຳໃນສ້າງນີ້ອີກ. ຂ້ອຍເຫັນຄັກແລ້ວວ່າອາດຍາແມ່ນປະພາສົກ. ບັນພະບຸລຸດຂອງພວກຂ້ອຍນົບໄຫວ້ພຣະເຈົ້າຢູ່ເທິງພູນີ້. ສ່ວນພວກທ່ານບອກວ່າ ບ່ອນຕ້ອງນົບໄຫວ້ນັ້ນແມ່ນຢູ່ນະຄອນເຢລູຊາແລມ.

ພຣະເຢຊູເຈົ້າກ່າວຕື່ມວ່າ: ນາງເອີຍ! ເຊື່ອເຮົາເຖີດ. ຮອດເວລາແລ້ວທີ່ພວກເຈົ້າຈະບໍ່ຕ້ອງນົບໄຫວ້ນຳມັດສະການພຣະບິດາເຈົ້າຢູ່ເທິງພູນີ້ຫລືຢູ່ນະຄອນເຢລູຊາແລມອີກຕໍ່ໄປ. ພວກເຈົ້ານົບໄຫວ້ສິ່ງທີ່ພວກເຈົ້າບໍ່ຮູ້ຈັກ. ຍ້ອນວ່າຄວາມຮອດມາຈາກພູຢູເດວ. ຮອດເວລາແລ້ວ, ແລະແມ່ນດຽວນີ້ເອງ, ພວກນົບໄຫວ້ແທ້ຈະນົບໄຫວ້ພຣະບິດາເຈົ້າໃນຈິດໃຈແລະໃນຄວາມຈິງ.

ຍິງນັ້ນຕອບວ່າ: ຂ້ອຍຮູ້ວ່າເມື່ອພະເມດຊີອາ ຄື ພຣະກຣິສໂຕຈະສະເດັດມານັ້ນ ພຣະອົງຈະສັ່ງສອນພວກເຮົາທຸກຢ່າງ.

ພຣະເຢຊູເຈົ້າຕອບວ່າ: ເຮົາຜູ້ເວົ້າກັບເຈົ້ານີ້ແລ້ວແມ່ນພະເມດຊີອາ. ຊາວຊາມາຣີເປັນຈຳນວນຫລາຍໄດ້ເຊື່ອເຖິງພຣະອົງ. ດັ່ງນີ້, ຊາວຊາມາຣີທີ່ມາຫາພຣະອົງ ຈຶ່ງເຊີນພຣະອົງໄປພັກເຊົາຢູ່ນຳພວກເຂົາ. ພຣະອົງກໍໄດ້ພັກເຊົານຳພວກເຂົາເປັນເວລາສອງວັນ. ແລະຍັງມີຫລາຍຄົນອີກທີ່ເຊື່ອເຖິງພຣະອົງ ຍ້ອນໄດ້ຍິນວາຈາຂອງພຣະອົງ. ພວກເຂົາເວົ້າກັບຜູ້ຍິງນັ້ນວ່າ: ດຽວນີ້ພວກເຮົາເຊື່ອ, ບໍ່ແມ່ນຍ້ອນຄວາມເວົ້າຂອງເຈົ້າດອກ. ແຕ່ຍ້ອນພວກເຮົາເອງໄດ້ຍິນເພິ່ນເວົ້າ ພວກເຮົາຈຶ່ງຮູ້ວ່າເພິ່ນນັ້ນແລ້ວ ແມ່ນຜູ້ກູ້ໄຖ່ໂລກແທ້.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ອາທິດທີ່ຜ່ານມາ, ຢູ່ບົນພູເຂົາ, ພຣະບິດາເຈົ້າໄດ້ໄຂສຳແດງຄວາມສຳພັນລະຫວ່າງພຣະເຢຊູເຈົ້າກັບພຣະອົງ. ແລະພຣະອົງໄດ້ບອກໃຫ້ພວກລູກສິດເຊື່ອຟັງພຣະບຸດສຸດທີ່ຮັກຂອງພຣະອົງ.

ວັນນີ້ພຣະເຢຊູເຈົ້າກໍສືບຕໍ່ໄຂສຳແດງພາລະກິດຂອງພຣະອົງ, ບໍ່ແມ່ນໃຫ້ພວກລູກສິດຮູ້ຈັກເທົ່ານັ້ນ ແຕ່ໃຫ້ຍິງສາວຄົນຕ່າງສາດສະໜາຊາວຊາມາຣີຮູ້ຈັກອີກດ້ວຍ. ແລະຈາກນັ້ນກໍມີຊາວຊາມາຣີເປັນຈຳນວນຫລາຍໄດ້ເຊື່ອເຖິງພຣະອົງ. ໝາຍວ່າຂ່າວດີແຫ່ງຄວາມຣອດຂອງພຣະເຢຊູເຈົ້າບໍ່ໄດ້ຈຳກັດແຕ່ນຳຜູ້ທີ່ພຣະອົງເລືອກສັນຄືພວກລູກສິດ ຫລືປະຊາກອນຂອງພຣະອົງຄືຊົນຊາດອິສຣາແອນເທົ່ານັ້ນ, ແຕ່ຄວາມຣອດຂອງພຣະເຢຊູເຈົ້າແມ່ນສຳລັບໝົດທຸກຄົນ. ເປັນຕົ້ນແມ່ນຜູ້ທີ່ເປີດໃຈເຊື່ອເຖິງພຣະອົງ. ນີ້ແລແມ່ນຂ່າວດີແຫ່ງຄວາມຣອດສຳລັບພວກເຮົາ. ແລະພວກເຮົາຕ້ອງມີໜ້າທີ່ນຳຂ່າວດີນີ້ໄປປະກາດໃຫ້ກັບຄົນອື່ນ, ເປັນຕົ້ນຄົນທີ່ຍັງບໍ່ຮູ້ຈັກພຣະເຢຊູເຈົ້າ. ເໝືອນກັບພຣະເຢຊູເຈົ້າໄດ້ນຳຂ່າວດີແຫ່ງຄວາມຣອດໄປໃຫ້ຍິງສາວຊາມາຣີ, ຄົນຕ່າງສາດສະໜາ. ແລະເໝືອນກັບຍິງສາວຊາມາຣີທີ່ໄດ້ນຳຂ່າວດີທີ່ນາງໄດ້ຮັບຈາກພຣະເຢຊູເຈົ້າໄປໃຫ້ຊາວຊາມາຄົນອື່ນຮູ້ຈັກ ເພື່ອພວກເຂົາຈະໄດ້ຮູ້ຈັກພຣະເຢຊູເຈົ້າແລະເຊື່ອເຖິງພຣະອົງ.

ສິ່ງທີ່ກ່າວມາຂ້າງເທິງນີ້ຊ່ວຍພວກເຮົາໃຫ້ເຂົ້າໃຈຄວາມໝາຍຂອງກຳນົດບຳເພັນສິນຫລາຍຂຶ້ນ. ເພາະໃນກຳນົດນີ້ບໍ່ແມ່ນເວລາທີ່ພວກເຮົາຕ້ອງທໍລະມານກາຍ, ຖືສິນອົດອາຫານດ້ວຍຄວາມໂສກເສົ້າ ແລະຕ້ອງພະຍາຍາມກະທຳສິ່ງໃດໜຶ່ງໃຫ້ພຣະເຈົ້າເທົ່ານັ້ນ. ແຕ່ກຳນົດບຳເພັນສິນນີ້ເປັນໂອກາດໃຫ້ພວກເຮົາໄດ້ຫຍັບເຂົ້າຫາພຣະເຈົ້າຫລາຍຂຶ້ນເພື່ອຟັງສຽງພຣະອົງ, ເພື່ອປາກເວົ້າສົນທະນາກັບພຣະອົງເໝືອນດັ່ງຍິງສາວຊາມາຣີທີ່ໄດ້ເປີດໃຈເພື່ອຮັບເອົາວາຈາພຣະເຢຊູເຈົ້າເຂົ້າມາໃນຊີວິດຂອງນາງ. ແຕ່ພວກເຮົາຈະມີເວລາເພື່ອຟັງສຽງຂອງພຣະອົງບໍ? ພວກເຮົາພ້ອມທີ່ຈະເປີດໃຈໃຫ້ພຣະອົງແລ້ວບໍ?

ຂໍໃຫ້ວາຈາພຣະເຈົ້າວັນນີ້ຊ່ວຍເປີດສະຕິປັນຍາ, ເປີດຕາ, ເປີດດວງໃຈຂອງພວກເຮົາ, ເພື່ອພວກເຮົາຈະໄດ້ຟັງສຽງພຣະເຢຊູເຈົ້າຫລາຍຂຶ້ນ, ຮູ້ຈັກພຣະອົງຫລາຍຂຶ້ນ ແລະຮັກພຣະອົງຫລາຍຂຶ້ນເຊັ່ນດຽວກັນ.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດຊ່ວຍລູກໃຫ້ຮູ້ຈັກກະຫາຍວາຈາຂອງພຣະອົງ. ເພາະມີແຕ່ວາຈາພຣະອົງເທົ່ານັ້ນທີ່ເປັນຫົນທາງ, ຄວາມຈິງແລະຊີວິດຂອງລູກນັ້ນແລ. ອາແມນ

ຄຸນພໍ່ ອົງຕອນ ກຽດຕິສັກ